EDL-GENໄດ້ຮັບລາງວັນ GREEN LEADERSHIP, ASIA RESPONSIBLE ENTERPRISE AWARDS ປະຈໍາປີ 2024



ໃນວັນທີ 29 ມິຖຸນາ 2024





ຕາງໜ້າຈາກ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຫຼື EDL-Gen ເຊິ່ງນໍາໂດຍ ທ່ານ ປອ. ບຸນແທ່ນ ຈັນສະໄໝ ຮອງຜູ້ອໍານວຍການ EDL-Gen ໄດ້ເຂົ້າຮ່ວມພິທີມອບ-ຮັບລາງວັນດັ່ງກ່າວ ເຊິ່ງຈັດຂຶ້ນທີ່ ໂຮງແຮມ Hilton Saigon, ນະຄອນຫຼວງ ໂຮ່ຈິມິນ, ປະເທດ ຫວຽດນາມ.

ໂດຍ EDL-Gen ໄດ້ສົ່ງຜົນງານດ້ານສັງຄົມ ແລະ ສິ່ງແວດລ້ອມ ເຂົ້າປະກວດ ແລະ ໄດ້ຮັບລາງວັນຊະນະເລີດໃນສາຂາ Green Leadership, Asia Responsible Enterprise Awards ປະຈໍາປີ 2024.

ການມອບລາງວັນດັ່ງກ່າວ ຈັດຂຶ້ນໂດຍ Enterprise Asia ເຊິ່ງແມ່ນເປັນອົງກອນທີ່ບໍ່ຫວັງຜົນກໍາໄລທີ່ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ປະກອບການທີ່ມີຄວາມຮັບຜິດຊອບໃນພາກພື້ນອາຊີ.

ເພື່ອຍ້ອງຍໍຊົມເຊີຍ ສໍາລັບບັນດາທຸລະກິດ ແລະ ຜູ້ນໍາໃນພາກພື້ນອາຊີ ທີ່ມີຄວາມຮັບຜິດຊອບດ້ານສັງຄົມ, ສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ທາງເລືອກທີ່ຍືນຍົງສໍາລັບທ່ານ, ພະລັງງານທີ່ຍືນຍົງສໍາລັບຊາດ